ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ 1915 /ກປ

ນະຄອນຫຼວງວຽງຈັນ, ວັນທີ 19 SEP 2013

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

### ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບຊຸກຍູ້ການເຈລະຈາ ແລະ ຄະນະປະສານງານ ຮັບຜິດຊອບດ້ານວິຊາການຕົກລົງຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ລະຫວ່າງ ສປປລາວ ກັບ ສະຫະພາບເອີຣົບ ແລະພັດທະນາວຽກງານການບັງຄັບໃຊ້ກົດໝາຍປ່າໄມ້ການຄຸ້ມຄອງ ແລະ ການຄ້າໄມ້ , (FLEGT)

- ອີງຕາມ ດຳລັດນາຍົກລັດຖະມົນຕີສະບັບເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມໃບສະເໜີຂອງກົມກວດກາປ່າໄມ້, ສະບັບເລກທີ 1345/ກກປມ, ລົງວັນທີ 06/09/2013.
- ອີງຕາມການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ, ສະບັບເລກທີ 2896/ກຈພ. ລົງວັນທີ 10/09/2013.

**ລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງຕົກລົງ:**

**ມາດຕາ 1.** ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຊຸກຍູ້ເຈລະຈາ ແລະ ຄະນະປະສານງານຮັບຜິດຊອບດ້ານວິຊາການຕົກລົງຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ພັດທະນາວຽກງານການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ລາຍລະອຽດມີດັ່ງລຸ່ມນີ້:

I. <u>ຄະນະຊີ້ນຳລວມ</u>:

| | | | |
|---|---|---|---|
| 1. | ທ່ານ ຄຳພຸດ ພົມດານຸວົງ | ຮັກສາການຫົວໜ້າກົມກວດກາປ່າໄມ້, ກະຊວງ ກປ | ເປັນຫົວໜ້າ |
| 2. | ທ່ານ ມະໂນຣັກ ຣາຊະຈັກ | ຮັກສາການຫົວໜ້າກົມອຸດສາຫະກຳ ແລະຫັດຖະກຳ,ກະຊວງອຸດສະຫະກຳ ແລະ ການຄ້າ | ເປັນຮອງ |
| 3. | ທ່ານ ເຂັມເດັດ ສີຫາວົງ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສະຫະກຳ ແລະ ການຄ້າ | ເປັນຮອງ |
| 4. | ທ່ານ ຄຳເພັດ ວິລະພັນເດດ | ຫົວໜ້າກົມກົດໝາຍ, ຫ້ອງວ່າການລັດຖະບານ | ເປັນຄະນະ |
| 5. | ທ່ານ ທຸມພັນ ສຸກປະສິດ | ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ | ເປັນຄະນະ |
| 6. | ທ່ານ ທອງແອັດ ໄພວັນ | ຮອງຫົວໜ້າກົມປ່າໄມ້, ກະຊວງ ກປ | ເປັນຄະນະ |
| 7. | ທ່ານ ສະຫວັນ ຫານພົມ | ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງ ກປ | ເປັນຄະນະ |

8. ທ່ານ ບົວພັນ ພັນທະວົງ ຮອງຫົວໜ້າກົມຄຸ້ມຄອງຊັບພະຍາກອນປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ

9. ທ່ານ ບຸນປະເສີດ ສີກຸນລະບຸດ ຮອງຫົວໜ້າກົມພາສີ, ກະຊວງການເງິນ ເປັນຄະນະ

10. ທ່ານ ຈັກກີ ບຸດຕະວົງ ຮອງຫົວໜ້າກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ ເປັນຄະນະ

11. ທ່ານ ສຸລິຍາ ສີດາວົງ ຮອງຫົວໜ້າກົມກົດໝາຍ, ກະຊວງຍຸດຕິທຳ ເປັນຄະນະ

12. ທ່ານ ອ່ອນມາ ຣາຊະວົງ ຮອງຫົວໜ້າກົມເສດຖະກິດ, ສະພາແຫ່ງຊາດ ແຫ່ງ ສປປ ລາວ ເປັນຄະນະ

13. ທ່ານ ດຣ. ເຂັ່ງຄຳ ແກ້ວໝູຈັນ ຮອງຫົວໜ້າກອງເລຂາຄະນະກຳມະການ ເພື່ອຄຸ້ມຄອງເສດຖະກິດພິເສດ ແລະ ເສດຖະກິດສະເພາະ, ຫ້ອງວ່າການລັດຖະບານ ເປັນຄະນະ

14. ທ່ານ ດຣ .ໄກສອນ ເພັງໂສພາ ຫົວໜ້າພະແນກສຶກສາຫຼັງປະລິນຍາຕີ, ຄະນະປ່າໄມ້ ມະຫາວິທະຍາໄລແຫ່ງຊາດ ກະຊວງສຶກສາ ແລະ ກິລາ ເປັນຄະນະ

15. ທ່ານ ທອງສະຫວັນ ສຸລິຍະມາດ ປະທານສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບລາວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ

16. ທ່ານ ຄຳໄຜ່ ສົມຊະນະ ປະທານສະມາຄົມເຟີນີເຈີລາວ ເປັນຄະນະ

17. ຕົວແທນຈາກກົມກົດໝາຍ ສະພາແຫ່ງຊາດ ແຫ່ງ ສປປ ລາວ ເປັນຄະນະ

18. ຕົວແທນຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ

19. ຕົວແທນຈາກບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ເຊັ່ນ : ກອງທຶນອະນຸລັກທຳມະຊາດໂລກ (WWF) ແລະ ອົງການ CSO ອື່ນໆ ທີ່ກ່ຽວຂ້ອງເປັນຄະນະໂດຍໄດ້ຮັບການຕົກລົງເຫັນດີຈາກຄະນະຊີ້ນຳລວມລະດັບຊາດ (National SteeringCommitee) ເປັນຄະນະ

20. ຕົວແທນຈາກບັນດາຂະແໜງການອື່ນໆ ທີ່ມີສ່ວນກ່ຽວຂ້ອງໃນກໍລະນີຂະບວນການເຈລະຈາຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ພັດທະນາວຽກງານການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ສຳລັບ ສປປ ລາວ ຫາກມີສ່ວນກ່ຽວຂ້ອງກັບຂະແໜງການນັ້ນໂດຍໄດ້ຮັບທິດຊີ້ນຳສະໜັບສະໜູນຈາກຂັ້ນເທິງ. ເປັນຄະນະ

- **ໜ້າທີ່ຮັບຜິດຊອບຂອງຄະນະກຳມະການດັ່ງກ່າວ ມີດັ່ງລຸ່ມນີ້ :**

1. ເປັນເຈົ້າການໃນການຄົ້ນຄວ້າ ແລະ ກະກຽມວຽກງານການເຈລະຈາການຕົກລົງຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ພັດທະນາວຽກງານການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະການຄ້າໄມ້ ໃຫ້ແກ່ຄະນະຊີ້ນຳລວມລະດັບຊາດ) National SteeringCommittee).
2. ຊ່ວຍປະສານງານກັບ ສະຫະພາບເອີຣົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ຂະບວນການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ການຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍ ການຄຸ້ມຄອງ ແລະ ການຄ້າໄມ້ ສຳລັບ ສປປ ລາວ ແລະ ຊ່ວຍຂະຫຍາຍບົດຮຽນ ທີ່ເປັນປະໂຫຍດອອກສູ່ສັງຄົມ.
3. ສັງລວມ ແລະ ລາຍງານ ເປັນປົກກະຕິກ່ຽວກັບຜົນການຈັດຕັ້ງປະຕິບັດວຽກງານການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບແລະການເຄື່ອນໄຫວວຽກງານການບັງຄັບໃຊ້ກົດໝາຍ ການຄຸ້ມຄອງ ແລະ ການຄ້າໄມ້ ສຳລັບ ສປປ ລາວ ໃຫ້ຄະນະຊີ້ນຳລວມລະດັບຊາດຊາບ ເພື່ອມີ

ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິຜົນ ແລະ ປະສິດທິພາບສູງ.

4. ຊ່ວຍຊີ້ນຳບັນດາໂຄງການສະໜັບສະໜູນຂະບວນການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ການຈັດຕັ້ງປະຕິບັດການບັງຄັບໃຊ້ ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ສຳລັບ ສປປ ລາວ.
5. ຊີ້ນຳຫ້ອງການປະສານງານການບັງຄັບໃຊ້ກົດໝາຍການຄຸ້ມຄອງ ແລະ ການຄ້າໄມ້ ສຳລັບ ສປປ , ລາວ ເພື່ອກະກຽມການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ; ປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ໃນ ສປປ ລາວ.

**II. ຄະນະປະສານງານຮັບຜິດຊອບດ້ານວິຊາການ :**

ຄະນະປະສານງານຮັບຜິດຊອບດ້ານວິຊາການ ການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະການຄ້າໄມ້ສຳລັບ ສປປ ລາວ (Technical Working Team) ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. ທ່ານ ບຸນທັນ ພິລາຈັນ ຫົວໜ້າ ພ/ນແຜນການ ແລະ ການຮ່ວມມື,ໄມ້ປ່າກວດກາກົມ ກະຊວງ ກປ ເປັນຫົວໜ້າ
2. ທ່ານ ພິມມາ ປະທຸມມະວົງ ຮອງຫົວໜ້າພະແນກພັດທະນາມາດຖານເຕັກນິກປ່າໄມ້, ກົມປ່າໄມ້ ເປັນຮອງ
3. ທ່ານ ພຸດທະວີ ຫຼວງໄຊ ຮອງຫົວໜ້າພະແນກມາດຕະຖານຜະລິດຕະພັນ ,ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສະຫະກຳ ແລະ ການຄ້າ ເປັນຄະນະ
4. ທ່ານ ດຣ. ປາດຖະໜາ ສີສຸກອາລຸນ ຫົວໜ້າພະແນກກົດໝາຍເສດຖະກິດສັງຄົມ, ກົມກົດໝາຍ ຫ້ອງວ່າການລັດຖະບານ ເປັນຄະນະ
5. ທ່ານ ສົມບູນ ໂຄດໄຊ ຫົວໜ້າພະແນກເສດຖະກິດສະພາແຫ່ງຊາດ ແຫ່ງ ສປປ ລາວ ເປັນຄະນະ
6. ທ່ານ ດຣ .ບຸນເດດ ສຸດທະວີໄລ ຮອງຫົວໜ້າພະແນກເຊື່ອມໂຍງເສດຖະກິດ, ກົມແຜນການ ແລະ ການຮ່ວມມື ກະຊວງ ກປ ເປັນຄະນະ
7. ທ່ານ ອຸແກ້ວ ສີຈະເລີນ ຮອງຫົວໜ້າພະແນກນິຕິກຳ ແລະ ເຕັກນິກ, ຫ້ອງວ່າການລັດຖະບານ ເປັນຄະນະ
8. ທ່ານ ວົງຄຳແຫງ ວົງທະສັກ ຮອງຫົວໜ້າພະແນກຄຸ້ມຄອງການສົ່ງອອກ ແລະ ນຳເຂົ້າ, ກົມພາສີ, ກະຊວງການເງິນ ເປັນຄະນະ
9. ທ່ານ ອຸດົມ ສີປະເສີດ ຫົວໜ້າກອງກວດກາປ່າປ້ອງກັນ ແລະ ປ່າສະຫງວນ, ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ
10. ທ່ານ ຄຳເພັດ ແກ້ວສຸວັນ ເຈົ້າໜ້າທີ່ປ່າໄມ້ ກົມກວດກາປ່າໄມ້ ເປັນຄະນະ
11. ທ່ານ ຄຳພອນ ບຸນທະວີ ເຈົ້າໜ້າທີ່ປ່າໄມ້ ກົມກວດກາປ່າໄມ້ ເປັນຄະນະ
12. ທ່ານ ແກ້ວພູວົງ ຈັນທະປັນຍາ ເຈົ້າໜ້າທີ່ປ່າໄມ້ ກົມກວດກາປ່າໄມ້ ເປັນຄະນະ
13. ທ່ານ ໂພໄຊ ອິນທະບົວລີ ວິຊາການ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງການເງິນ ເປັນຄະນະ
14. ທ່ານ ອາລຸນສິດ ມະນີຜົນ ພະນັກງານວິຊາການອາວຸໂສ ພະແນກເອີຣົບ ແລະ ອາເມລິກາ, ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການຮ່ວມມື ເປັນຄະນະ

15. ທ່ານ ວິນັດ ໄຊຍະວົງ ວິຊາການ ທີ່ປຶກສາວຽກງານ FLEGT, ສະມາຄົມອຸດສາຫະກໍາປຸງແຕ່ງໄມ້ ແຫ່ງຊາດລາວ ເປັນຄະນະ
16. ທ່ານ ອ.ຈ ບາຄໍາ ຈັນທະວົງ ຫົວໜ້າໜ່ວຍວິຊາເສດຖະສາດປ່າໄມ້, ຄປມ ເປັນຄະນະ
17. ທ່ານ ອ.ຈ ບຸນເຍັນ ສິດທິຈັກ ທີ່ປຶກສາປະຈໍາສະມາຄົມເຟີນີເຈີລາວ ເປັນຄະນະ
18. ຕົວແທນຈາກສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຄະນະ
19. ຕົວແທນຈາກບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ເຊັ່ນ: ກອງທຶນອານຸລັກທໍາມະຊາດໂລກ (WWF) ແລະ ອົງການ CSO ອື່ນໆ ທີ່ກ່ຽວຂ້ອງ ເປັນຄະນະ ໂດຍໄດ້ຮັບການຕົກລົງເຫັນດີຈາກຄະນະຊີ້ນໍາລວມລະດັບຊາດ) National SteeringCommittee) ເປັນຄະນະ
20. ຕົວແທນຈາກບັນດາຂະແໜງການອື່ນໆ ທີ່ມີສ່ວນກ່ຽວຂ້ອງໃນກໍລະນີຂະບວນການຄົ້ນຄວ້າທາງວິຊາການ ເພື່ອການເຈລະຈາຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປລາວ ກັບ ສະຫະພາບເອີຣົບ ແລະ ພັດທະນາວຽກງານການບັງຄັບໃຊ້ ກົດໝາຍ, ການຄຸ້ມຄອງ ແລະການຄ້າໄມ້ ສໍາລັບ ສປປ ລາວ ຫາກມີສ່ວນກ່ຽວຂ້ອງກັບຂະແໜງການນັ້ນໂດຍໄດ້ຮັບທິດຊີ້ນໍາສະໜັບສະໜູນຈາກຂັ້ນເທິງ ເປັນຄະນະ

- **ໜ້າທີ່ຮັບຜິດຊອບຂອງຄະນະດັ່ງກ່າວ ມີດັ່ງລຸ່ມນີ້:**

1. ເປັນເຈົ້າການຊ່ວຍວຽກຄະນະຊີ້ນໍາລວມລະດັບຊາດ ແລະ ກອງເລຂາ ເພື່ອປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການກໍານົດໂຄງການ, ສ້າງໂຄງການ ແລະ ອອກແບບໂຄງການ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ, ຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ຂອງ ສປປ ລາວ. ໂດຍສະເພາະແມ່ນການເສີມສ້າງພັດທະນາລະບົບການຢັ້ງຢືນໄມ້ (FSC), ການກວດກາຊັບພະຍາກອນປ່າໄມ້, ການຄຸ້ມຄອງຊັບພະຍາກອນປ່າໄມ້, ການຄ້າໄມ້, ການປຸງແຕ່ງຜະລິດຕະພັນໄມ້ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິຜົນ ແລະ ປະສິດທິພາບສູງ.
2. ປະສານງານກັບບັນດາຜູ້ປະກອບການ ເພື່ອມີສ່ວນຮ່ວມພັດທະນາການບັງຄັບໃຊ້ກົດໝາຍ, ການຄຸ້ມຄອງ ແລະ ການຄ້າໄມ້ ຂອງ ສປປ ລາວ.
3. ເປັນເຈົ້າການຊ່ວຍວຽກຂອງ ຄະນະກອງເລຂາເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ.
ຊ່ວຍວຽກປະສານສົມທົບກັບສະຫະພາບເອີຣົບ ແລະ ພາກສ່ວນທີ່ກ່ຽວຂ້ອງທັງ ພາຍໃນ ແລະ ຕ່າງປະເທດ ລະດັບວິ ຊາການ ເພື່ອຊຸກຍູ້ຂະບວນການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ, ການຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍ ການຄຸ້ມຄອງ ແລະ ການຄ້າໄມ້ ສໍາລັບ ສປປ ລາວ.
4. ການ ແລະ ຖອດຖອນບົດຮຽນລະດັບວິຊາການໃນເຂດພາກພື້ນ ແລະ ສາກົນ.
5. ຊ່ວຍວຽກຈັດຕັ້ງປະຕິບັດບັນດາໂຄງການສະໜັບສະໜູນຂະບວນການເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ, ການຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍ ການຄຸ້ມຄອງ ແລະ ການຄ້າໄມ້ ສໍາລັບ ສປປ ລາວ.

6. ຊ່ວຍວຽກສັງລວມເກັບກຳຂໍ້ມູນຄວາມຄືບໜ້າ, ຊ່ວຍຮ່າງບົດລາຍງານການຈັດຕັ້ງປະຕິບັດເຈລະຈາການຕົກລົງຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ໃນແຕ່ລະໄລຍະໃຫ້ຄະນະຊາກຍູ້ວຽກງານເຈລະຈາ ເພື່ອມີການປັບປຸງ ແລະລາຍງານ ຕໍ່ຂັ້ນເທິງຮັບຊາບເປັນປົກກະຕິ ແລະ ພ້ອມທັງລາຍງານການຈັດຕັ້ງປະຕິບັດວຽກງານການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສຳລັບ ສປປ ລາວ ລະດັບວິຊາການ ຕໍ່ຂັ້ນເທິງຮັບຊາບເປັນປົກກະຕິ.

**ມາດຕາ 2.** ມອບໃຫ້ ກົມກວດກາປ່າໄມ້, ທ່ານທີ່ຖືກແຕ່ງຕັ້ງຕາມ ມາດຕາ 1 ຈົ່ງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮມ. ລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້

ດຣ. ເພັດ ພົມພິພັກ

ບ່ອນນຳສົ່ງ:
- ກົມຈັດຕັ້ງ ແລະ ພະນັກງານ 01 ສະບັບ
- ກົມກວດກາປ່າໄມ້ 01 ສະບັບ
- ພົນດາທ່ານທີ່ຖືກແຕ່ງຕັ້ງ ທ່ານລະ 01 ສະບັບ
- ເກັບມ້ຽນ 01 ສະບັບ